ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 16 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 31 . 3 . 2014

# ຄຳສັ່ງ

## ວ່າດ້ວຍການສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ 6 ເດືອນຕົ້ນສົກປີ, ຄາດຄະເນການຈັດຕັ້ງປະຕິບັດໝົດ ສົກປີ 2013-2014 ແລະ ການກະກຽມສ້າງແຜນການ ສົກປີ 2014-2015

ເຖິງ: ບັນດາທ່ານລັດຖະມົນຕີວ່າການ, ທ່ານຫົວໜ້າອົງການຂັ້ນສູນກາງ, ທ່ານເຈົ້າຄອງນະຄອນຫຼວງ ແລະ ບັນດາທ່ານເຈົ້າແຂວງໃນທົ່ວປະເທດ.

- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 02/ສພຊ, ລົງວັນທີ 26 ກໍລະກົດ 2013.
- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 241/ລບ, ລົງວັນທີ 12 ກັນຍາ 2013 ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2013-2014.
- ເຫັນຕາມການຄົ້ນຄວ້ານຳສະເໜີຂອງລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 0608/ຜທ.ກຜ1, ລົງວັນທີ 19 ມີນາ 2014.

ເພື່ອເຮັດໃຫ້ການສະຫຼຸບຕີລາຄາສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 6 ເດືອນຕົ້ນສົກປີ, ຄາດຄະເນການຈັດຕັ້ງປະຕິບັດໝົດ ສົກປີ 2013-2014 ແລະ ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2014-2015 ມີຜົນສຳເລັດ ແທດເໝາະກັບສະພາບຕົວຈິງ ແລະ ໃຫ້ທັນຕາມກຳນົດເວລາ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ ດັ່ງນີ້:

### I. ກ່ຽວກັບການສະຫຼຸບຕີລາຄາການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນສົກປີ 2013-2014.

**1. ສະຫຼຸບແຜນພັດທະນາເສດຖະກິດ-ສັງຄົມ:**

ໃຫ້ຂະແໜງການ ແລະ ທ້ອງຖິ່ນ ຖືເອົາບັນດາທິດທາງ, ໜ້າທີ່, ຄາດໝາຍສູ້ຊົນ ແລະ ວຽກງານຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສົກປີ 2013-2014 ມາເປັນບ່ອນອີງ ເພື່ອສົມທຽບໃສ່ການຈັດຕັ້ງປະຕິບັດຕົວຈິງ ແລະ ເປັນບ່ອນອີງໃຫ້ແກ່ການວິໄຈ ເຖິງຜົນສຳເລັດທີ່ພົ້ນເດັ່ນທີ່ຕ້ອງໄດ້ສືບຕໍ່ຜັນຂະຫຍາຍ, ຂໍ້ຄົງຄ້າງທີ່ຕ້ອງໄດ້ຮັບການແກ້ໄຂ, ພ້ອມທັງບົດຮຽນ ແລະ ວິທີການປັບປຸງແກ້ໄຂໃນຕໍ່ໜ້າ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດບັນດາໜ້າທີ່ຄວາມຮັບຜິດຊອບທີ່ລັດຖະບານໄດ້ມອບໃຫ້ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ຕາມດຳລັດ ສະບັບເລກທີ 241/ລບ ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປະຈຳສົກປີ 2013-2014. ໃຫ້ຕີລາຄາເບິ່ງວ່າອັນໃດເຮັດໄດ້ ແລະ ອັນໃດເຮັດບໍ່ໄດ້, ພ້ອມກັນນັ້ນ ກໍຕ້ອງໄດ້ກວດກາເບິ່ງການປະຕິບັດບັນດາມາດຕະການຕ່າງໆທີ່ລັດຖະບານປະກາດນຳໃຊ້ ເພື່ອຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຄວາມ

ໝັ້ນທ່ຽງຂອງເສດຖະກິດມະຫາພາກ, ການສົ່ງເສີມການຜະລິດ ແລະ ອື່ນໆ, ໃນນີ້ ຕ້ອງໄດ້ອະທິບາຍຊີ້ແຈງຢ່າງລະອຽດວ່າ ອັນໃດເຮັດໄດ້ ແລະ ອັນໃດເຮັດບໍ່ໄດ້ ຍ້ອນສາເຫດອັນໃດ?.

**2. ສະຫຼຸບແຜນການລົງທຶນ:**

ໃຫ້ສະຫຼຸບການຈັດຕັ້ງປະຕິບັດການລົງທຶນຈາກ 4 ແຫຼ່ງທຶນຕົ້ນຕໍຄື: ທຶນຈາກງົບປະມານລັດ (ທຶນພາຍໃນ), ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ, ການລົງທຶນຈາກພາກສ່ວນເອກະຊົນພາຍໃນ ແລະ ຕ່າງປະເທດ ແລະ ສິນເຊື່ອທະນາຄານ.

**2.1 ການລົງທຶນຂອງລັດ (ທຶນພາຍໃນ):**

- ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນຕີລາຄາສະພາບການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ໃນໄລຍະ 6 ເດືອນຜ່ານມາ; ໃນນັ້ນ, ຕ້ອງຊີ້ໃຫ້ເຫັນເຖິງຜົນສຳເລັດໃນການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ, ການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຈຳນວນໂຄງການ ທີ່ໄດ້ຈັດຕັ້ງປະຕິບັດສຳເລັດ 100% ມີເທົ່າໃດ? ສະພາບການຊຳລະໂຄງການ ແລະ ການຊຳລະໜີ້ສິນເປັນຄືແນວໃດ? ໂຄງການທີ່ໄດ້ປະຕິບັດແຕ່ຍັງບໍ່ທັນຖືກຮັບຮອງຈາກສະພາແຫ່ງຊາດ (ໂຄງການນອກແຜນ) ມີບໍ່?

- ກ່ຽວກັບໂຄງການໃໝ່ທີ່ເອົາເຂົ້າແຜນການລົງທຶນຂອງລັດ ໃນສົກປີ 2013-2014 ໃຫ້ບັນດາກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ແຂວງ ປະຕິບັດດັ່ງນີ້:

(1) ໃຫ້ກວດກາເບິ່ງໂຄງການໃໝ່ທັງໝົດທີ່ສະພາແຫ່ງຊາດໄດ້ຮັບຮອງນັ້ນ ໄດ້ຜ່ານການປະເມີນຜົນຈາກອົງການທີ່ມີສິດອຳນາດກ່ອນເອົາເຂົ້າແຜນ ຈັກໂຄງການ? ແຕ່ລະໂຄງການປະເມີນໄດ້ປະເພດໃດ? (ປະເພດ A, B, C, D, F) ແລະ ມີຈັກໂຄງການບໍ່ໄດ້ຜ່ານການປະເມີນຜົນ? ຍ້ອນເຫດຜົນຫຍັງ?

(2) ໃນຈຳນວນທີ່ໄດ້ຈັດຕັ້ງປະຕິບັດໄປແລ້ວນັ້ນ ມີຈັກໂຄງການທີ່ໄດ້ເຮັດການປະມູນຕາມລະບຽບການ ແລະ ຈັກໂຄງການບໍ່ໄດ້ເຮັດການປະມູນສົມທຽບລາຄາ, ຍ້ອນເຫດຜົນຫຍັງ?

(3) ໃຫ້ບັນດາກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ແຂວງ ກວດກາເບິ່ງໂຄງການທີ່ເຫັນວ່າບໍ່ມີປະສິດທິຜົນ ຫຼື ໂຄງການທີ່ບໍ່ທັນມີຄວາມຈຳເປັນຈັດຕັ້ງປະຕິບັດໃນສົກປີນີ້ ເພື່ອຈະຄົ້ນຄວ້າພິຈາລະນາໂຈະ ຫຼື ອວ່າຍທຶນ ໄປໃສ່ໂຄງການອື່ນທີ່ມີຄວາມຈຳເປັນກວ່າ.

(4) ໃຫ້ບັນດາກະຊວງ, ອົງການ, ນະຄອນຫລວງວຽງຈັນ ແລະ ແຂວງ ສະຫຼຸບສັງລວມໂຄງການລົງທຶນຂອງລັດ ທີ່ຈັດຕັ້ງປະຕິບັດຢູ່ໃນເມືອງ ແລະ ບ້ານເປົ້າໝາຍທົດລອງ 3 ສ້າງ ມີຈັກໂຄງການ?, ແຕ່ລະໂຄງການມີມູນຄ່າເທົ່າໃດ?

- ກ່ຽວກັບໜີ້ສິນໂຄງການລົງທຶນຂອງລັດ:

(1) ໃຫ້ກວດກາຄືນໜີ້ສິນໂຄງການລົງທຶນຂອງລັດທີ່ໄດ້ຊຳລະໃນສົກປີ 2011-2012 ແລະ 2012-2013 ຜ່ານມາ ມີເທົ່າໃດໂຄງການ, ມູນຄ່າຊຳລະເທົ່າໃດ; ໃນນີ້, ໃຫ້ຈຳແນກລະອຽດການຊຳລະໜີ້ແບບມີສ່ວນຫຼຸດ ແລະ ດ້ວຍພັນທະບັດ ມີຈັກໂຄງການ? ມູນຄ່າເທົ່າໃດ?

(2) ໃຫ້ສັງລວມໜີ້ສິນໂຄງການລົງທຶນຂອງລັດ (ໜີ້ຈາກໂຄງການໃນແຜນທີ່ສະພາແຫ່ງຊາດຮັບຮອງທັງໝົດ) ມາຮອດປະຈຸບັນ ຍັງເຫຼືອຈັກໂຄງການ? ມູນຄ່າຕາມສັນຍາມີເທົ່າໃດ? ມູນຄ່າຄ້າງຊຳລະຕາມສັນຍາມີເທົ່າໃດ? ມູນຄ່າຄ້າງຊຳລະຕາມໜ້າວຽກທີ່ປະຕິບັດແລ້ວມີເທົ່າໃດ?

(3) ໃຫ້ສັງລວມໂຄງການນອກການຮັບຮອງຂອງສະພາແຫ່ງຊາດ (ໂຄງການນອກແຜນ) ທີ່ໄດ້ລົງມືຈັດຕັ້ງປະຕິບັດນັບແຕ່ວັນທີ 1 ມັງກອນ 2012 ເປັນຕົ້ນມາ, ໂຄງການລົງທຶນກ່ອນ ແລະ ໂຄງການລົງທຶນດ້ວຍການທັນຊັບສິນເປັນທຶນທີ່ລັດຖະບານ, ຂະແໜງການ ຫຼື ອົງການປົກຄອງທ້ອງຖິ່ນ ໄດ້ຕົກລົງໃຫ້ຈັດຕັ້ງປະຕິບັດແລ້ວ ແລະ ມາຮອດປະຈຸບັນການຊຳລະບໍ່ທັນສຳເລັດ.

(4) ໃຫ້ສັງລວມໂຄງການປະເພດ 1 (ມູນຄ່າແຕ່ 50 ຕື້ກີບຂຶ້ນໄປ) ແລະ ໂຄງການຂະໜາດໃຫຍ່ມູນຄ່ານັບແຕ່ 500 ຕື້ກີບຂຶ້ນໄປ ທີ່ການຊຳລະບໍ່ໄປຕາມສັນຍາ.

(5) ໃຫ້ສັງລວມໂຄງການລົງທຶນຂອງລັດທີ່ໄດ້ຖືກຮັບຮອງແຜນງົບປະມານຈາກສະພາແຫ່ງຊາດແລ້ວ, ແຕ່ເມື່ອຈັດຕັ້ງປະຕິບັດບໍ່ສາມາດຊຳລະໄດ້ຕາມແຜນງົບປະມານທີ່ສະພາແຫ່ງຊາດອະນຸມັດ (ໜີ້ຄ້າງໃນລະບົບຄັງເງິນ ສົກປີ 2012-2013).

(ກ່ຽວກັບໜີ້ສິນໃຫ້ປະຕິບັດຕາມຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ, ລົງວັນທີ 12 ກຸມພາ 2014).

- <u>ກ່ຽວກັບການລົງທຶນຂອງລັດວິສາຫະກິດ ແລະ ວິສາຫະກິດປະສົມ:</u> ໃຫ້ສັງລວມການລົງທຶນຂອງລັດວິສາຫະກິດ ແລະ ວິສາຫະກິດປະສົມ ລະຫວ່າງ ລັດກັບເອກະຊົນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ, ໃນນີ້ ໃຫ້ລາຍງານຈຳນວນຫົວໜ່ວຍ, ຈຳນວນການລົງທຶນເຂົ້າເປັນທຶນຄົງທີ່ ແລະ ທຶນໝູນວຽນທັງໝົດເທົ່າໃດ? ສຳລັບວິສາຫະກິດປະສົມ ໃຫ້ແຈ້ງໃຫ້ຊາບວ່າຮຸ້ນຂອງລັດໃນວິສາຫະກິດດັ່ງກ່າວມີຈັກເປີເຊັນ ແລະ ໃຫ້ແຍກສະເພາະສ່ວນທີ່ລັດໄດ້ລົງທຶນ (ຕາຕະລາງເກັບກຳຂໍ້ມູນລະອຽດໄດ້ຄັດຕິດມາພ້ອມນີ້).

**2.2 <u>ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ):</u>**

ໃຫ້ສະຫຼຸບໂຄງການທີ່ພວມຈັດຕັ້ງປະຕິບັດມີຈັກໂຄງການ? ໂຄງການຊ່ວຍເຫຼືອລ້າ (ລວມທັງໂຄງການຊ່ວຍເຫຼືອດ້ານເຕັກນິກ ຫຼື TA) ມີຈັກໂຄງການ ແລະ ມູນຄ່າ ເທົ່າໃດ? ໂຄງການກູ້ຢືມມີຈັກໂຄງການ ແລະ ມູນຄ່າເທົ່າໃດ? ມີທຶນສົມທົບພາຍໃນເທົ່າໃດ? ຄຽງຄູ່ກັນນັ້ນ ໃຫ້ສະຫຼຸບສັງລວມບັນດາແຜນງານ/ໂຄງການ ຊກພ ໃໝ່ທີ່ໄດ້ເຊັນກັບຜູ້ໃຫ້ທຶນໃນ 6 ເດືອນຕົ້ນສົກປີ ມີຈັກໂຄງການ ແລະ ມູນຄ່າເທົ່າໃດ?, ໃນນີ້ ໃຫ້ແຍກໂຄງການຊ່ວຍເຫຼືອລ້າ (ລວມທັງໂຄງການຊ່ວຍເຫຼືອດ້ານເຕັກນິກ ຫຼື TA) ມີຈັກໂຄງການ ແລະ ມູນຄ່າເທົ່າໃດ? ກູ້ຢືມມີຈັກໂຄງການ ແລະ ມູນຄ່າເທົ່າໃດ?, ມີທຶນສົມທົບພາຍໃນເທົ່າໃດ? ພ້ອມກັນນັ້ນ ໃຫ້ຄາດຄະເນການປະຕິບັດໝົດສົກປີ 2013-2014 ຈະສາມາດເຊັນສັນຍາຮັບໂຄງການ ຊກພ ເທົ່າໃດໂຄງການ, ມູນຄ່າເທົ່າໃດ? ໝົດສົກປີ 2013-2014 ຈະສາມາດປະຕິບັດໄດ້ທັງໝົດຈັກໂຄງການ? ມູນຄ່າເທົ່າໃດ?. ໃນສົກປີ 2013-2014 ນີ້ ຄາດວ່າຈະມີຈັກໂຄງການຈະສຳເລັດ 100% ແລະ ນຳເຂົ້າສູ່ການຊົມໃຊ້, ໂດຍສະເພາະແມ່ນໂຄງການຂະໜາດໃຫຍ່ທີ່ມີທຶນ ແຕ່ 20 ລ້ານໂດລາຂຶ້ນໄປ. (ຕາຕະລາງເກັບກຳຂໍ້ມູນລະອຽດໄດ້ຄັດຕິດມາພ້ອມນີ້)

**2.3 <u>ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ:</u>**

ໃຫ້ລາຍງານຈຳນວນໂຄງການທີ່ໄດ້ອະນຸມັດໃໝ່ ໃນ 6 ເດືອນ ຕົ້ນສົກປີມີຈັກໂຄງການ, ມີມູນຄ່າທຶນຈົດທະບຽນເທົ່າໃດ ແລະ ທຶນນຳໃຊ້ຕົວຈິງໃນໄລຍະ 6 ເດືອນ ມີເທົ່າໃດ? (ລວມທັງໂຄງການເກົ່າ ແລະ ໂຄງການອະນຸມັດໃນສົກປີ 2013-2014). ຈຳນວນໂຄງການທີ່ໄດ້ຈັດຕັ້ງປະຕິບັດ ໃນ 6 ເດືອນຕົ້ນສົກປີມີຈັກໂຄງການ? ມີມູນຄ່າເທົ່າໃດ? ໂດຍແຍກໃຫ້ເຫັນໂຄງການສຳປະທານ, ໂຄງການທົ່ວໄປ ແລະ ໂຄງການທີ່ປະຕິບັດໃນເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະ (ຖ້າມີ). ໂຄງການລົງທຶນຂອງພາກເອກະຊົນເວົ້າລວມ ໄດ້ປະກອບສ່ວນເຂົ້າໃນການພັດທະນາ ແລະ ການສ້າງວຽກເຮັດງານທຳ ແລະ ເພີ່ມລາຍໄດ້ໃຫ້ແກ່ຊຸມຊົນ ແລະ ປະຊາຊົນຄືແນວໃດ? ໂຄງການທີ່ອະນຸມັດແລ້ວ ແຕ່ບໍ່ໄດ້ຈັດຕັ້ງປະຕິບັດມີຈັກໂຄງການ, ມູນຄ່າເທົ່າໃດ? ແລະ ດ້ວຍເຫດຜົນຫຍັງ? ໃຫ້ຕີລາຄາເບິ່ງສະພາບການອຳນວຍຄວາມສະດວກໃຫ້ແກ່ຜູ້ມາລົງທຶນ ໂດຍສະເພາະແມ່ນການບໍລິການ ການລົງທຶນຜ່ານປະຕູດຽວ ທີ່ປະຈຸບັນ ໄດ້ແບ່ງຄວາມຮັບຜິດຊອບລະຫວ່າງ ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ເຂດເສດຖະກິດພິເສດໄດ້ສ້າງຄວາມດຶງດູດໃຫ້ນັກລົງທຶນໄດ້ດີຂຶ້ນບໍ່? ລະບົບ ຫຼື ກົນໄກການປະສານງານກັນ ລະຫວ່າງ ຂະແໜງການ ແລະ ທ້ອງຖິ່ນກ່ຽວຂ້ອງເປັນແນວໃດ? ການໃຫ້ບໍລິການການລົງທຶນຜ່ານປະຕູດຽວຢູ່ທ້ອງຖິ່ນມີຄວາມຄືບໜ້າຄືແນວໃດ? ການສ້າງບັນຊີຮຽກການລົງທຶນໄດ້ສຳເລັດແລ້ວບໍ່? ໄດ້ສ້າງຄວາມດຶງດູດໃຫ້ນັກລົງທຶນໄດ້ບໍ່? ໃຫ້ສະຫຼຸບຕີລາຄາສະພາບການປະຕິບັດຄຳສັ່ງ ສະບັບເລກທີ 13/ນຍ ຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ໄດ້ດຳເນີນຄືແນວໃດແລ້ວ? ມີດ້ານດີ ແລະ ດ້ານອ່ອນຄືແນວໃດ, ທິດທາງໃນຕໍ່ໜ້າຈະສືບຕໍ່ແນວໃດ?

ຂະແໜງການ ແລະ ທ້ອງຖິ່ນ ສະຫຼຸບບັນດາໂຄງການທີ່ໄດ້ສຳເລັດ ແລະ ນຳເຂົ້າສູ່ການຊົມໃຊ້ ໂດຍສະເພາະແມ່ນໂຄງການຂະໜາດໃຫຍ່ (ຕາຕະລາງເກັບກຳຂໍ້ມູນລະອຽດໄດ້ຄັດຕິດມາພ້ອມນີ້).

**2.4 <u>ການປ່ອຍສິນເຊື່ອຂອງທະນາຄານ:</u>**

ໃຫ້ສະຫຼຸບການປ່ອຍສິນເຊື່ອ ໃນໄລຍະ 6 ເດືອນຕົ້ນສົກປີ, ຄາດຄະເນໝົດສົກປີ 2013-2014 ມີມູນຄ່າເທົ່າໃດ?, ທຽບໃສ່ສົກປີຜ່ານມາເພີ່ມຂຶ້ນເທົ່າໃດ? ໃຫ້ຕີລາຄາສະພາບການປ່ອຍສິນເຊື່ອວ່າຖືກຕາມທິດທາງ ແລະ ໄປຕາມເປົ້າໝາຍຂອງແຜນການປີໄດ້ກຳນົດໄວ້ ຫຼື ບໍ່ ? ເປັນຕົ້ນການສົ່ງເສີມການຜະລິດເປັນສິນຄ້າ, ການຜະລິດຂອງອຸດສາຫະກຳຂະໜາດກາງ ແລະ ຂະໜາດນ້ອຍ (SMEs), ການຜະລິດຂອງກຸ່ມການຜະລິດ ແລະ ການຜະລິດ-ບໍລິການຂອງຄົວເຮືອນ; ພ້ອມນີ້ ກໍໃຫ້ສະຫຼຸບຕີລາຄາສັງລວມດ້ານດີ, ດ້ານອ່ອນ ແລະ ສາເຫດ.

## II. ການຄາດຄະເນປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນ ທ້າຍສົກປີ 2013-2014.

1. ຂະແໜງການ ແລະ ທ້ອງຖິ່ນ ຄາດຄະເນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໝົດສົກປີ 2013-2014, ໂດຍຖືເອົາບັນດາທິດທາງໜ້າທີ່ ແລະ ຄາດໝາຍສູ້ຊົນ ແລະ ຜົນສຳເລັດຂອງການຈັດຕັ້ງປະຕິບັດໃນໄລຍະ 6 ເດືອນຜ່ານມາເປັນບ່ອນອີງ; ພ້ອມກັນນັ້ນ ກໍໃຫ້ກວດເບິ່ງຄວາມອາດສາມາດ ແລະ ເງື່ອນໄຂຕົວຈິງໃນການຈັດຕັ້ງປະຕິບັດ, ປັດໃຈຕ່າງໆທັງພາຍໃນ ແລະ ສາກົນ ທີ່ອາດກະທົບໃສ່ການຈັດຕັ້ງປະຕິບັດແຜນການໃນ 6 ເດືອນຕໍ່ໜ້າ.

2. ຂະແໜງການ ແລະ ທ້ອງຖິ່ນ ກຳນົດວຽກຈຸດສຸມທີ່ປະຕິບັດໃນຕໍ່ໜ້າ ລວມທັງວິທີການ ແລະ ມາດຕະການໃນການຜັນຂະຫຍາຍຜົນສຳເລັດທີ່ໄດ້ຮັບໃນໄລຍະຜ່ານມາໃຫ້ສືບຕໍ່ໄດ້ຮັບໝາກຜົນຍິ່ງຂຶ້ນ ແລະ ເພື່ອແກ້ໄຂບັນຫາຄົງຄ້າງຕ່າງໆໃຫ້ຕົກໄປ ໂດຍສະເພາະແມ່ນບັນດາວຽກງານທີ່ໄດ້ສະແດງຜ່ານຕົວຊີ້ວັດທີ່ເຫັນວ່າຈະບໍ່ສາມາດບັນລຸໄດ້ຕາມແຜນການ.

3. ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ມີຜົນສຳເລັດຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້ ຖ້າຂະແໜງການ ແລະ ທ້ອງຖິ່ນໃດ ຍັງເຫັນວ່າຍັງມີຄວາມຈຳເປັນຕ້ອງໄດ້ປະສານງານ ຫຼື ຮັບການຊ່ວຍເຫຼືອຈາກລັດຖະບານ ກໍໃຫ້ຄົ້ນຄວ້ານຳສະເໜີ ເພື່ອຂໍທິດຊີ້ນຳຈາກຂັ້ນເທິງ.

4. ເພື່ອຮັບປະກັນໃຫ້ການປະຕິບັດວຽກຈຸດສຸມໃນໄລຍະ 6 ເດືອນທ້າຍສົກປີ ບັນລຸຜົນ, ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ກຳນົດມາດຕະການຈັດຕັ້ງປະຕິບັດ ສຳລັບ 6 ເດືອນທ້າຍສົກປີ 2013-2014 ຕົ້ນຕໍ ໃຫ້ອີງໃສ່ມາດຕະການທີ່ໄດ້ກຳນົດໄວ້ໃນແຜນການປີ ແລະ ຂໍ້ຕົກລົງສະບັບເລກທີ 14/ນຍ, ລົງວັນທີ 07/02/2014 ວ່າດ້ວຍມາດຕະການຮັກສາສະຖຽນລະພາບຂອງເສດຖະກິດມະຫາພາກ ເພື່ອຊຸກຍູ້ຈັງຫວະການເຕີບໂຕຢ່າງຕໍ່ເນື່ອງຕາມທິດຍືນຍົງ; ນອກຈາກນັ້ນ, ໃຫ້ຂະແໜງການ ແລະ ທ້ອງຖິ່ນ ຄົ້ນຄ້ວາຕື່ມບັນຫາທີ່ເຫັນວ່າ ມີຄວາມຈຳເປັນ ເພື່ອສະເໜີລັດຖະບານພິຈາລະນາເປັນມາດຕະການໃນການຈັດຕັ້ງປະຕິບັດບັນດາຄາດໝາຍຕ່າງໆໃຫ້ບັນລຸ.

## III. ກ່ຽວກັບການສ້າງແຜນການ ສົກປີ 2014-2015.

ສົກປີ 2014-2015 ແມ່ນປີມ້ອນທ້າຍຂອງການປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ແລະ ທັງແມ່ນສົກປີສຸດທ້າຍຂອງການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015). ດັ່ງນັ້ນ, ການກະກຽມແຜນການ ສົກປີ 2014-2015 ແມ່ນມີຄວາມສຳຄັນຫຼາຍ ເພື່ອຮັບປະກັນໃຫ້ການປະຕິບັດທິດທາງ, ໜ້າທີ່ ແລະ ຄາດໝາຍສູ້ຊົນຂອງມະຕິ IX ແລະ ແຜນການ 5 ປີ ຄັ້ງທີ VII ໃຫ້ໄດ້ຮັບຜົນສຳເລັດ.

### 1. ທິດທາງລວມ ແລະ ຄາດໝາຍ ຂອງແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2014-2015.

ເພື່ອເປັນບ່ອນອີງໃຫ້ແກ່ບັນດາຂະແໜງການ ແລະ ທ້ອງຖິ່ນ ໃນການກະກຽມແຜນການ ສົກປີ 2014-2015 ຂອງຕົນ, ຈຶ່ງໄດ້ຄາດຄະເນເບື້ອງຕົ້ນບັນດາທິດທາງ ແລະ ຄາດໝາຍໃຫຍ່ຈຳນວນໜຶ່ງ ຂອງແຜນພັດທະນາເສດຖະກິດ-ສັງຄົມດັ່ງນີ້:

#### 1.1. ທິດທາງລວມ:

ທິດທາງລວມຂອງແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2014-2015 ແມ່ນສືບຕໍ່ປະຕິບັດຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ແລະ ບັນດາທິດທາງໃຫຍ່ຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII, ຄື: ຮັບປະກັນສະຖຽນລະພາບທາງດ້ານເສດຖະກິດມະຫາພາກ, ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ຍືນຍົງ ຖືການພັດທະນາເສດຖະກິດເປັນໃຈກາງຕິດພັນກັບການພັດທະນາສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ; ສົ່ງເສີມການຜະລິດເປັນສິນຄ້າ, ສ້າງໃຫ້ໄດ້ການຜະລິດສິນຄ້າຕົວແບບ, ສຸມໃສ່ການພັດທະນາຊົນນະບົດ ແລະ ແກ້

ໄຂຄວາມທຸກຍາກ ກ່ອນອື່ນໝົດແມ່ນຕ້ອງໄດ້ແກ້ໄຂຄວາມທຸກຍາກຂອງຄົວເຮືອນ, ເຂດທີ່ໝັ້ນປະຕິວັດ ແລະ ເຂດ ຈຸດສຸມຂອງສູນກາງ ແລະ ຂອງທ້ອງຖິ່ນ; ພັດທະນາວັດທະນາທຳ-ສັງຄົມ ໄປຄວບຄູ່ກັບການພັດທະນາເສດຖະກິດ, ຖືເອົາການບຸກທະລຸດ້ານການສຶກສາ, ການຂະຫຍາຍສາທາລະນະສຸກ, ການພັດທະນາແຮງງານ, ການເສີມຂະຫຍາຍຄຸນຄ່າວັດທະນະທຳທີ່ດີງາມຂອງຊາດ; ບຸກທະລຸທາງດ້ານກົນໄກຄຸ້ມຄອງບໍລິຫານລັດ ໄປພ້ອມກັບການຍົກສູງຄວາມສັກສິດ, ປະສິດທິຜົນ ແລະ ຄວາມໂປ່ງໃສຂອງການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ; ສົມທົບແໜ້ນການພັດທະນາເສດຖະກິດ-ສັງຄົມກັບການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສົມທົບແໜ້ນການເປີດກວ້າງການພົວພັນຕ່າງປະເທດ ກັບການປັບປຸງ ພາຍໃນຢ່າງຮອບດ້ານ ເພື່ອເພີ່ມຄວາມສາມາດແຂ່ງຂັນ, ເສີມຂະຫຍາຍກຳລັງແຮງສັງລວມຂອງຊາດ ແລະ ກຳລັງແຮງຂອງ ຍຸກສະໄໝເຂົ້າໃນການພັດທະນາປະເທດ; ປະຕິບັດຍຸດທະສາດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ດ້ວຍບາດກ້າວ ທີ່ຕັ້ງໜ້າ ແລະ ໜັກແໜ້ນຂຶ້ນຕື່ມ.

### 1.2. ຄາດໝາຍຕົ້ນຕໍ:

- ຮັບປະກັນໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຍືນຍົງ, ລວມຍອດຜະລິດຕະພັນພາຍໃນເພີ່ມຂຶ້ນໃນລະດັບ 8%. ຄາດຄະເນມູນຄ່າ GDP ຈະໃຫ້ໄດ້ໃນລະດັບ 103.300 ຕື້ກີບ, ອັດຕາເງິນເຟີ້ໃຫ້ຢູ່ໃນລະດັບຕໍ່າກວ່າອັດຕາການຂະຫຍາຍຕົວຂອງເສດຖະກິດ, ປະລິມານເງິນ ($M_2$) ໃຫ້ເພີ່ມຂຶ້ນໃນຈັງຫວະທີ່ເໝາະສົມ ແລະ ບໍ່ກະທົບໃສ່ອັດຕາເງິນເຟີ້, ຮັກສາອັດຕາແລກປ່ຽນໃຫ້ມີສະຖຽນລະພາບ, ເງິນກີບແຂງຄ່າ ຫຼື ອ່ອນຄ່າ ຢູ່ໃນລະດັບ ບໍ່ກາຍ 5% ທຽບກັບເງິນຕາຕ່າງປະເທດສະກຸນຫຼັກ.
- ຊຸກຍູ້ການສົ່ງອອກສິນຄ້າ ໃຫ້ເພີ່ມຂຶ້ນ 15% ແລະ ການນຳເຂົ້າ ເພີ່ມຂຶ້ນ 10%, ສູ້ຊົນໃຫ້ຄັງສຳຮອງເງິນຕາຕ່າງປະເທດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ກຸ້ມການນຳເຂົ້າໃຫ້ໄດ້ຢ່າງໜ້ອຍ 5 ເດືອນ.
- ຜະລິດເຂົ້າ ທັງໝົດ ໃຫ້ໄດ້ 4,2 ລ້ານໂຕນ.
- ຜະລິດໄຟຟ້າ ໃຫ້ໄດ້ 14.800 ລ້ານກິໂລວັດໂມງ, ແຮ່ທາດ ໃຫ້ໄດ້ 15.350 ຕື້ກີບ, ນັກທ່ອງທ່ຽວເຂົ້າມາປະເທດໃຫ້ໄດ້ ປະມານ 4 ລ້ານຄົນ.
- ສູ້ຊົນບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs) ໃຫ້ໄດ້ເປັນສ່ວນໃຫຍ່, ສ່ວນເປົ້າໝາຍທີ່ມີຄວາມຫຍຸ້ງຍາກຫຼາຍ ໃຫ້ບັນລຸໄດ້ໂດຍພື້ນຖານ.

## 2. ແຜນການການລົງທຶນ:

### 2.1. ການດຸ່ນດ່ຽງແຫຼ່ງທຶນເພື່ອພັດທະນາ:

ເພື່ອຮັບປະກັນໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ໃນສົກປີ 2014-2015 ບັນລຸໄດ້ 8% ທຽບໃສ່ສົກປີຜ່ານມາ, ມີຄວາມຕ້ອງການລົງທຶນທັງໝົດ ປະມານ 33.000 ຕື້ກີບ ຫຼື ເທົ່າກັບ 32% ຂອງ GDP ໃນນັ້ນ:

- ການລົງທຶນຈາກງົບປະມານລັດ ໃຫ້ໄດ້ 3.300-3.500 ຕື້ກີບ.
- ທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກຕ່າງປະເທດ ໃຫ້ໄດ້ 4.800-5.200 ຕື້ກີບ ຫຼື ເທົ່າກັບ 600-650 ລ້ານໂດລາ.
- ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ 16.800-17.600 ຕື້ກີບ ຫຼື ເທົ່າກັບ 2.100-2.200 ລ້ານໂດລາ.
- ສິນເຊື່ອທະນາຄານ ໃຫ້ໄດ້ 6.500-7.000 ຕື້ກີບ.

### 2.2. ການລົງທຶນຈາກງົບປະມານ (ທຶນພາຍໃນ):

- ທິດທາງການລົງທຶນ: ໃນສົກປີນີ້ ໃຫ້ສຸມໃສ່ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ຍູ້ການຜະລິດສິນຄ້າ ແລະ ສ້າງລາຍຮັບຕົວຈິງໃຫ້ປະຊາຊົນ ເປັນຕົ້ນ: ສຸມໃສ່ການລົງທຶນໃນຂົງເຂດການຜະລິດກະສິກຳ, ການປຸງແຕ່ງຜະລິດຕະພັນກະສິກຳ; ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະໜັບສະໜູນວຽກງານຢູ່ເມືອງ ແລະ ບ້ານເປົ້າໝາຍທົດລອງ 3 ສ້າງ, ເຂດຈຸດສຸມພັດທະນາຂອງສູນກາງ ແລະ ທ້ອງຖິ່ນ, ພັດທະນາເຂດຊາຍແດນ, ເຂດທີ່ໝັ້ນປະຕິວັດ, ກະກຽມຄວາມພ້ອມໃນການຕ້ານແລ້ງ-ຕ້ານຖ້ວມ ແລະ ຕອບໂຕ້ໄພພິບັດທາງທຳມະຊາດ. ບັນຫາສຳຄັນການລົງທຶນ

ຕ້ອງມີຈຸດສຸມ, ມີປະສິດທິຜົນ ແລະ ບໍ່ສ້າງໜີ່ແໜງທີ່ຈະພາໃຫ້ເກີດໜີ້ສິນໃໝ່ຂຶ້ນຕື່ມອີກ, ຕົ້ນຕໍແມ່ນສຸມໃສ່ໂຄງການສືບຕໍ່ທີ່ມີປະສິດທິຜົນ ແລະ ໃກ້ຈະສໍາເລັດ.

- <u>ໂຄງປະກອບການລົງທຶນ</u> (ການລົງທຶນຈາກງົບປະມານພາຍໃນ ແລະ ທຶນຊ່ວຍເຫຼືອເພື່ອການພັດທະນາ ):

ອີງຕາມຂອບຂອງແຜນການ 5 ປີ ຄັ້ງທີ VII (2011-2015); ໃຫ້ຈັດໂຄງປະກອບການນໍາໃຊ້ທຶນຂອງລັດຕາມແຕ່ລະຂົງເຂດດັ່ງນີ້:

+ ຂົງເຂດເສດຖະກິດ ກວມປະມານ 30% ຂອງການລົງທຶນລັດທັງໝົດ.
+ ຂົງເຂດສັງຄົມ ກວມປະມານ 35% ຂອງການລົງທຶນລັດທັງໝົດ.
+ ເສັ້ນທາງ ແລະ ສໍານັກງານອົງການ ກວມປະມານ 35% ຂອງການລົງທຶນລັດທັງໝົດ.

- <u>ບູລິມະສິດໃນການຈັດສັນທຶນ:</u>

- ໂດຍອີງຕາມຄວາມສາມາດຂອງງົບປະມານ, ລັດຖະບານມອບໃຫ້ກະຊວງແຜນການ ແລະ ການລົງທຶນ ແຈ້ງເພດານທຶນພາຍໃນ ສໍາລັບການປະຕິບັດໂຄງການລົງທຶນຂອງລັດ ສົກປີ 2014-2015 ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນເພື່ອເປັນບ່ອນອີງໃຫ້ແກ່ການກໍານົດໂຄງການລົງທຶນໃຫ້ໄປຕາມຂອບເຂດເພດານດັ່ງກ່າວ. ໃນເພດານທຶນທີ່ບັນດາຂະແໜງການ ແລະ ທ້ອງຖິ່ນໄດ້ຮັບນັ້ນ ແມ່ນລວມທັງທຶນສໍາລັບການພັດທະນາຊົນນະບົດ, ທຶນພັດທະນາເຂດຊາຍແດນ ແລະ ທຶນສໍາລັບວຽກງານ 3 ສ້າງ ເຂົ້ານໍາ.

- ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ອີງໃສ່ຕົວເລກເພດານດັ່ງກ່າວ ໃນການເລືອກເຟັ້ນ ແລະ ຈັດສັນໂຄງການລົງທຶນຂອງຕົນ ເຂົ້າໃນແຜນການ ສົກປີ 2014-2015 ຕາມບູລິມະສິດດັ່ງນີ້:

(1) ຈັດສັນເປັນທຶນສົມທົບກັບຕ່າງປະເທດ ເພື່ອປະຕິບັດໂຄງການທີ່ໄດ້ເຊັນສັນຍາ ຫຼື ມີຂໍ້ຕົກລົງເປັນລາຍລັກອັກສອນກັບຄູ່ຮ່ວມພັດທະນາແລ້ວໃຫ້ຄົບຖ້ວນຕາມສັນຍາທີ່ໄດ້ເຊັນນໍາກັນ (ລວມທັງໂຄງການສືບຕໍ່ ແລະ ໂຄງການສະເໜີໃໝ່).

(2) ລົງທຶນໃສ່ໂຄງການສືບຕໍ່ທີ່ມີປະສິດທິຜົນ ແລະ ໃກ້ຈະສໍາເລັດ ໂດຍໃຫ້ຄົ້ນຄວ້າຈັດສັນທຶນໃສ່ຕາມມູນຄ່າສັນຍາຂອງໂຄງການທີ່ຕ້ອງ ຊໍາລະໃນສົກປີ 2014-2015. ສໍາລັບໂຄງການສືບຕໍ່ອື່ນໆ ທີ່ບໍ່ທັນມີຄວາມຈໍາເປັນຮີບດ່ວນ ກໍໃຫ້ພິຈາລະນາໂຈະ ຫຼື ເລື່ອນໄປກ່ອນ.

(3) ສໍາລັບໂຄງການສະເໜີໃໝ່ ຖ້າມີຄວາມຈໍາເປັນຮີບດ່ວນແທ້ ໃຫ້ຂະແໜງການ ແລະ ທ້ອງຖິ່ນກວດກາເບິ່ງຄວາມສາມາດຈະຊໍາລະສະສາງ ແລ້ວສະເໜີໃຫ້ກະຊວງແຜນການ ແລະ ການລົງທຶນ ສົມທົບກັບກະຊວງການເງິນຄົ້ນຄວ້າຕື່ມ ເພື່ອນໍາສະເໜີລັດຖະບານພິຈາລະນາເປັນແຕ່ລະໂຄງການ.

- <u>ກົນໄກ ແລະ ຂັ້ນຕອນການຄົ້ນຄວ້າກໍານົດໂຄງການລົງທຶນ ແລະ ຈັດສັນງົບປະມານ.</u>

ເພື່ອຮັບປະກັນໃຫ້ບັນດາໂຄງການລົງທຶນທີ່ໄດ້ຈັດເຂົ້າໃນແຜນການ ສົກປີ 2014-2015 ຖືກທິດ, ມີຈຸດສຸມ ແລະ ບໍ່ສ້າງໜີ້ສິນໃໝ່ເພີ່ມຂຶ້ນ,ໃຫ້ຈັດຕັ້ງຄະນະກໍາມະການຈັດສັນໂຄງການລົງທຶນເຂົ້າໃນແຜນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນດັ່ງນີ້:

- <u>ຢູ່ຂັ້ນສູນກາງ:</u> ຄະນະກໍາມະການຈັດສັນໂຄງການລົງທຶນຂອງລັດປະກອບດ້ວຍ ຜູ້ຕາງໜ້າກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ຫ້ອງວ່າການລັດຖະບານ, ຕາງໜ້າກໍາມາທິການຂອງສະພາແຫ່ງຊາດ, ຕາງໜ້າຂະແໜງການກ່ຽວຂ້ອງ. ຄະນະກໍາມະການດັ່ງກ່າວມີໜ້າທີ່ກວດກາບັນດາໂຄງການລົງທຶນທີ່ຂະແໜງການຕ່າງໆຂອງສູນກາງໄດ້ສະເໜີມາເພື່ອຮັບປະກັນໃຫ້ແຜນການລົງທຶນມີຈຸດສຸມ, ຖືກຕາມເປົ້າໝາຍບູລິມະສິດ, ສອດຄ່ອງກັບຄວາມສາມາດຂອງງົບປະມານ ແລະ ຮັບປະກັນບໍ່ໃຫ້ສ້າງໜີ້ສິນໃໝ່ຕື່ມ ແລ້ວຈຶ່ງບັນຈຸໂຄງການດັ່ງກ່າວເຂົ້າໃນຮ່າງແຜນການລົງທຶນ ເພື່ອນໍາສະເໜີລັດຖະບານພິຈາລະນາ.

- <u>ຢູ່ຂັ້ນທ້ອງຖິ່ນ:</u> ຄະນະກໍາມະການຈັດສັນໂຄງການລົງທຶນຂອງລັດຂັ້ນແຂວງປະກອບດ້ວຍ ຜູ້ຕາງໜ້າຂອງພະແນກແຜນການ ແລະ ການລົງທຶນ, ພະແນກການເງິນ, ຜູ້ຕາງໜ້າຄະນະສະພາເຂດ, ຜູ້ຕາງໜ້າພະແນກການທີ່ກ່ຽວຂ້ອງ ໂດຍການເປັນປະທານຂອງທ່ານຮອງເຈົ້າແຂວງຜູ້ຊີ້ນໍາວຽກເສດຖະກິດ. ຄະນະກໍາມະການດັ່ງກ່າວ ມີໜ້າທີ່ກວດກາຮ່າງແຜນ

ການລົງທຶນ ທີ່ບັນດາເມືອງ ແລະ ພະແນກການຕ່າງໆອ້ອມຂ້າງແຂວງສະເໜີມາ ເພື່ອຮັບປະກັນໃຫ້ແຜນການດັ່ງກ່າວມີຈຸດສຸມ (ໝາຍວ່າບໍ່ແຈກຢາຍທຶນທີ່ມີຈຳກັດ ໄປໃສ່ຫຼາຍໆໂຄງການ ເຊິ່ງຈະເປັນໜໍ່ແໜງໃຫ້ສ້າງໜີ້ສິນໃນຕໍ່ໜ້າ) ຖືກຕາມເປົ້າໝາຍບຸລິມະສິດແລ້ວຈຶ່ງນຳສະເໜີຮ່າງແຜນການລົງທຶນ ຕໍ່ຄະນະພັກແຂວງພິຈາລະນາ ແລ້ວສະເໜີຫາລັດຖະບານຕາມລະບຽບການ.

- **<u>ສຳລັບການຊຳລະໜີ້ສິນ ສົກປີ 2014-2015 ຄື:</u>**

- ຄະນະຊີ້ນຳແກ້ໄຂໜີ້ສິນໂຄງການລົງທຶນຂອງລັດຂັ້ນສູນກາງສັງລວມໜີ້ສິນຄືນໃໝ່ທັງໝົດທົ່ວປະເທດ ໂດຍແມ່ນກະຊວງແຜນການ ແລະ ການລົງທຶນ ໃນນາມກອງເລຂາເປັນຜູ້ສັງລວມບັນດາໂຄງການທີ່ເປັນໜີ້ຢ່າງລະອຽດຂອງຂະແໜງການ ແລະ ທ້ອງຖິ່ນທັງໝົດ ພ້ອມທັງຄົ້ນຄວ້ານະໂຍບາຍ, ກົນໄກ ແລະ ມາດຕະການແກ້ໄຂສະເໜີລັດຖະບານ.

- ມອບໃຫ້ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ທ່ານເຈົ້າແຂວງ ແຕ່ງຕັ້ງທ່ານຮອງເຈົ້າຄອງ, ຮອງເຈົ້າແຂວງຜູ້ຮັບຜິດຊອບຊີ້ນຳວຽກງານເສດຖະກິດ ຮັບຜິດຊອບວຽກນີ້ໂດຍກົງ ໂດຍໃຫ້ພະແນກແຜນການ ແລະ ການລົງທຶນ ແລະພະແນກການເງິນຂອງຕົນເປັນເສນາທິການຊ່ວຍວຽກ.

- ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ສົມທົບກະຊວງການເງິນ ແລະ ບັນດາກະຊວງ, ອົງການຂັ້ນສູນກາງ, ນະຄອນຫຼວງວຽງຈັນ ແລະ ແຂວງຕ່າງໆ ສັງລວມໜີ້ສິນໂຄງການລົງທຶນຂອງລັດໃຫ້ສຳເລັດ ແລະ ລາຍງານຕໍ່ຄະນະຊີ້ນຳແກ້ໄຂໜີ້ສິນໂຄງການລົງທຶນຂອງລັດຂັ້ນສູນກາງພາຍໃນເດືອນ 3/2014 ເພື່ອລາຍງານຂໍທິດຊີ້ນຳຈາກລັດຖະບານໃນຂັ້ນຕໍ່ໄປ (ລາຍລະອຽດມີໃນຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ, ລົງວັນທີ 12 ກຸມພາ 2014).

- <u>ການກຳນົດ ແລະ ຈັດສັນງົບປະມານໃສ່ໂຄງການລົງທຶນສຳລັບເມືອງ ແລະ ບ້ານເປົ້າໝາຍທົດລອງ 3 ສ້າງ:</u>

- ໃນສົກປີ 2014-2015 ໃຫ້ແຕ່ລະທ້ອງຖິ່ນສືບຕໍ່ຈັດສັນງົບປະມານການລົງທຶນ ໃຫ້ບັນດາເມືອງເຮັດທົດລອງ 3 ສ້າງ <u>ເມືອງໜຶ່ງຢ່າງໜ້ອຍ 3 ຕື້ກີບ</u> ເພື່ອຈັດໃສ່ໂຄງການສືບຕໍ່ເປັນຕົ້ນຕໍ. ທຶນດັ່ງກ່າວແມ່ນນອນຢູ່ໃນເພດານທຶນທີ່ກະຊວງແຜນການ ແລະ ການລົງທຶນ ແຈ້ງໃຫ້ທ້ອງຖິ່ນ ແລະ ຈະບໍ່ມີແຫຼ່ງທຶນສະເພາະຕ່າງຫາກ ເພື່ອຈັດສັນເຂົ້າໃນວຽກງານ 3 ສ້າງ.

- ໄປຄຽງຄູ່ກັບການລົງທຶນຂອງລັດ ບັນດາແຂວງ, ນະຄອນຫຼວງວຽງຈັນ ແລະ ບັນດາເມືອງ ຕ້ອງໄດ້ຕັ້ງໜ້າອອກແຮງຂົນຂວາຍ ແລະ ລະດົມທຶນ ຈາກຄູ່ຮ່ວມພັດທະນາ ແລະ ການລົງທຶນຂອງເອກະຊົນທັງພາຍໃນ ແລະ ຕ່າງປະເທດ, ກອງທຶນພັດທະນາຂອງບ້ານ ແລະ ສິນເຊື່ອຈາກທະນາຄານ ເພື່ອສະໜັບສະໜູນເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ ຂອງເມືອງຕົນ ໂດຍບໍ່ໃຫ້ເອື່ອຍອີງໃສ່ແຕ່ການນຳໃຊ້ງົບປະມານລັດພຽງຢ່າງດຽວ.

**2.3. <u>ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ):</u>**

ການນຳໃຊ້ທຶນຊ່ວຍເຫຼືອ ແລະ ກູ້ຢືມ ແມ່ນເລັ່ງໃສ່ການພັດທະນາດ້ານສັງຄົມ, ການຮັກສາສະພາບແວດລ້ອມໃຫ້ຍືນຍົງ ໂດຍມີເປົ້າໝາຍຫຼັກແມ່ນເພື່ອບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs); ສຳລັບທຶນກູ້ຢືມພວກເຮົາຄວນສຸມໃສ່ການກໍ່ສ້າງບັນດາໂຄງການ ແລະ ກິດຈະກຳຂອງບັນດາພື້ນຖານໂຄງລ່າງ ແລະ ການພັດທະນາຊັບພະຍາກອນມະນຸດຢູ່ຊົນນະບົດເພື່ອຮັບປະກັນໃຫ້ການພັດທະນາມີຄວາມຍືນຍົງ. ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນສັງລວມເອົາບັນດາໂຄງການສືບຕໍ່ ແລະ ໂຄງການທີ່ຈະໄດ້ຮັບການຊ່ວຍເຫຼືອ, ກູ້ຢືມ (ລວມທັງໂຄງການຊ່ວຍເຫຼືອດ້ານເຕັກນິກ ຫຼື TA) ໃນສົກປີ 2014-2015 (ທີ່ມີການຢັ້ງຢືນຄັກແນ່) ເຂົ້າໃນແຫຼ່ງທຶນດັ່ງກ່າວ; ພ້ອມກັນນັ້ນ ກໍ່ໃຫ້ກຳນົດຄວາມຕ້ອງການທຶນສົມທົບ (ຖ້າມີ) ຢ່າງຈະແຈ້ງ.

**2.4. <u>ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ:</u>**

ການນຳໃຊ້ທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ແມ່ນເລັ່ງໃສ່ໂຄງການຂະໜາດໃຫຍ່ ທີ່ເປັນຫົວຈັກແກ່ດຶງການພັດທະນາເສດຖະກິດຂອງປະເທດ ເປັນຕົ້ນ: ໂຄງການກໍ່ສ້າງເຂື່ອນໄຟຟ້າ ແລະ ໂຮງງານໄຟຟ້າ, ໂຄງການຂຸດຄົ້ນແຮ່ທາດທີ່ໄດ້ຮັບອະນຸຍາດແລ້ວ, ໂຄງການປູກພືດ ແລະ ປູກໄມ້ອຸດສະຫະກຳ ທີ່ໄດ້ຮັບອະນຸຍາດແລ້ວ. ພ້ອມກັນນັ້ນ ກໍໃຫ້ເອົາໃຈໃສ່ການດຶງດູດແຫຼ່ງທຶນເຂົ້າໃນໂຄງການຂະໜາດນ້ອຍ ແລະ ຂະໜາດກາງ ທີ່ມີຜົນກະທົບຕໍ່ລາຍຮັບຂອງປະຊາຊົນ

ຢ່າງກວ້າງຂວາງ ແລະ ບັນດາໂຄງການທີ່ນຳໃຊ້ວິທະຍາສາດ-ເຕັກໂນໂລຊີທັນສະໄໝ, ສົ່ງເສີມການລົງທຶນເຂົ້າໃສ່ການຜະລິດໃນຂົງເຂດກະສິກຳ ແລະ ການປຸງແຕ່ງ ເພື່ອຫັນປ່ຽນໂຄງປະກອບການລົງທຶນໃຫ້ໄປສູ່ຄຸນນະພາບໃໝ່ເປັນກ້າວໆ.

### 2.5. <u>ສິນເຊື່ອທະນາຄານ:</u>

ການນຳໃຊ້ທຶນຈາກສິນເຊື່ອທະນາຄານແມ່ນເລັ່ງໃສ່ການຜະລິດເປັນສິນຄ້າ, ໂຄງການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ຊຸກຍູ້ສົ່ງເສີມການຜະລິດ-ບໍລິການຂອງຄົວເຮືອນ, ການຜະລິດຂອງກຸ່ມການຜະລິດ, ການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ແນໃສ່ສ້າງວຽກເຮັດງານທຳ ແລະ ເພີ່ມລາຍໄດ້ໃຫ້ປະຊາຊົນ. ພ້ອມກັນນັ້ນ ກໍສະໜອງສິນເຊື່ອໃຫ້ແກ່ການຜະລິດຂະໜາດກາງ ແລະ ຂະໜາດໃຫຍ່ ເພື່ອແນໃສ່ການສົ່ງອອກ ແລະ ຍູ້ການເຕີບໂຕຂອງເສດຖະກິດແຫ່ງຊາດ.

## IV. <u>ມາດຕະການຈັດຕັ້ງປະຕິບັດ</u>

1) ພາຍຫຼັງໄດ້ຮັບຄຳສັ່ງສະບັບນີ້ແລ້ວ, ໃຫ້ບັນດາກະຊວງ, ອົງການຂັ້ນສູນກາງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຈົ່ງຮີບຮ້ອນຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ເນື້ອໃນຈິດໃຈດັ່ງກ່າວໃຫ້ກົມກອງ, ພະແນກ ແລະ ພາກສ່ວນຕ່າງໆທີ່ຂຶ້ນກັບຕົນ ເພື່ອພ້ອມກັນຈັດຕັ້ງປະຕິບັດ ດ້ວຍຄວາມຮັບຜິດຊອບສູງ.
2) ບັນດາຂະແໜງການ ແລະ ທ້ອງຖິ່ນ ຕ້ອງໄດ້ເສີມຂະຫຍາຍສິດເປັນເຈົ້າໃນການຈັດຕັ້ງປະຕິບັດວຽກງານ 3 ສ້າງ ໃຫ້ສຳເລັດຕາມຈຸດປະສົງເປົ້າໝາຍ, ເພີ່ມທະວີການປະສານງານເຊິ່ງກັນ ແລະ ກັນ; ໃຫ້ຖືເອົາວຽກງານສະຫຼຸບ 6 ເດືອນຕົ້ນສົກປີ 2013-2014 ແລະ ການສ້າງແຜນການສົກປີ 2014-2015 ເປັນພາກສ່ວນໜຶ່ງຂອງຂະບວນການທົດລອງ 3 ສ້າງ.
3) ພາຍຫຼັງແຕ່ລະຂະແໜງ ແລະ ທ້ອງຖິ່ນ ໄດ້ສຳເລັດການສະຫຼຸບ 6 ເດືອນຕົ້ນປີ, ຄາດໝາຍໝົດສົກປີ 2013-2014 ແລະ ສ້າງຮ່າງແຜນການສົກປີ 2014-2015 ແລ້ວໃຫ້ສົ່ງເຖິງ ກະຊວງແຜນການ ແລະ ການລົງທຶນ <u>ກ່ອນວັນທີ 01/04/2014.</u>
4) ມອບໃຫ້ລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນຕ່າງໆ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ໃຫ້ມີຜົນສຳເລັດຕາມກຳນົດເວລາ, ຮັບປະກັນຈຸດປະສົງເປົ້າໝາຍ ແລະ ເນື້ອໃນຄຳສັ່ງສະບັບນີ້ຢ່າງຄົບຖ້ວນ.

## V. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

**ທອງສິງ ທຳມະວົງ**